ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖານເອກອັກຄະລັດຖະທູດ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ທີ່ ນະຄອນຫລວງ ປາຣີ

**ແຈ້ງການຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຢູ່ ສປປ ລາວ**

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳປະເທດຝຣັ່ງ ຂໍຖືເປັນກຽດແຈ້ງມາຍັງ ບັນດາພໍ່ແມ່ພີ່ນ້ອງຄົນເຊື້ອຊາດລາວທີ່ຢູ່ປະເທດຝຣັ່ງຊາບທົ່ວເຖິງກັນວ່າ ປະຈຸບັນ ສປປ ລາວ ກຳລັງປະເຊີນກັບໄພພິບັດນ້ຳຖ້ວມຢ່າງຮ້າຍແຮງ ຈາກຜົນກະທົບຂອງມະຫາພາຍຸຢາກິ (Super Typhoon YAGI) ຊຶ່ງເປັນພາຍຸລູກໃຫຍ່ທີ່ສຸດທີ່ພັດເຂົ້າ ສປປ ລາວ ໃນຮອບຫຼາຍສິບປີຜ່ານມາ ໂດຍໄດ້ເຮັດໃຫ້ເກີດນ້ຳຖ້ວມຢ່າງຮຸນແຮງ ແລະ ເປັນບໍລິເວນກວ້າງຂວາງຢູ່ແຂວງຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆຂອງລາວ ຊຶ່ງໄດ້ເຮັດໃຫ້ມີຜູ້ເສຍຊີວິດ, ໄດ້ຮັບບາດເຈັບ ແລະ ສ້າງຄວາມເສຍຫາຍຕໍ່ຊັບສິນຂອງປະຊາຊົນຢ່າງຮຸນແຮງອັນໄດ້ເຮັດໃຫ້ສະພາບການດຳລົງຊີວິດຂອງປະຊົນໃນພື້ນທີ່ດັ່ງກ່າວມີຄວາມຫຍຸ້ງຍາກຫລາຍ ແລະ ມີຄວາມຕ້ອງການການຊ່ວຍເຫລືອຢ່າງຮີບດ່ວນທາງດ້ານອາຫານການກິນ, ນ້ຳດື່ມ, ຢາປົວພະຍາດ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ອຸປະໂພກທີ່ຈຳເປັນອື່ນໆ.

ເພື່ອຮັບມືກັບສະພາບການອັນສຸກເສີນ ແລະ ຮ້າຍແຮງດັ່ງກ່າວ, ລັດຖະບານ ສປປລາວ ກໍ່ໄດ້ຮີບຮ້ອນໃຫ້ການຊ່ວຍເຫຼືອປະຊາຊົນທີ່ໄດ້ຮັບຜົນກະທົບຈາກພາຍຸດັ່ງກ່າວຕາມຄວາມສາມາດ ພ້ອມທັງໄດ້ຮຽກຮ້ອງມາຍັງພໍ່ແມ່ພີ່ນ້ອງຄົນລາວທັງຢູ່ພາຍໃນ ແລະ ຕ່າງປະເທດ ຕະຫລອດທຸກພາກສ່ວນໃນສັງຄົມເພື່ອຮ່ວມແຮງຮ່ວມໃຈກັນຊ່ວຍເຫຼືອຜູ້ປະສົບໄພພິບັດດັ່ງກ່າວ.

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳ ປະເທດຝຣັ່ງ ຈຶ່ງໄດ້ແຈ້ງມາຍັງພໍ່ແມ່ພີ່ນ້ອງ ຄົນເຊື້ອຊາດລາວທີ່ອາໄສຢູ່ປະເທດຝລັ່ງ ກໍຄືປະຊາຊົນເພື່ອນມິດຊາວຝຣັ່ງ ແລະຢູ່ໃນໂລກ ທີ່ມີຈິດໃຈ ເອື້ອເຟື້ອເພື່ອແຜ່ ແລະ ມີຄວາມກະລຸນາ ເພື່ອໃຫ້ການຊ່ວຍເຫລືອ ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ດັ່ງກ່າວຕາມກຳລັງຈິດສັດທາຂອງຕົນ. ທ່ານສາມາດບໍລິຈາກຜ່ານບັນຊີທະນາຄານຂອງສະຖານທູດ ດັ່ງລຸ່ມນີ້:

1. Par virement:

Ambassade du la RDP Lao
BRED Banque populaire
Compte numéro: 728 02 7781
IBAN : FR7610107008680072802778121

2. Par chèque à l'ordre de:

l'Ambassade de la RDP Lao, 74 avenue Raymond Poincaré, 75116 Paris

ຜູ້ປະສານງານ: ທ່ານ ນາງ ທອນ ສິມພາວິໄລ, ເບີໂທ: 06 86 57 08 26, ອີເມວ: ambalaoparis@orange.fr

ດັ່ງນັ້ນ, ສະຖານເອກອັກຄະລັດຖະທູດ ສປປ ລາວ ປະຈຳ ປະເທດຝລັ່ງ ຈຶ່ງຂໍແຈ້ງຂ່າວມາຍັງ ພໍ່ແມ່ພີ່ນ້ອງໄດ້ຊາບທົ່ວເຖິງກັນ ແລະ ຫວັງຢ່າງຍິ່ງວ່າ ບັນດາທ່ານ ຈະໃຫ້ການຊ່ວຍເຫຼືອໃນເວລາ ທີ່ມີຄວາມຈຳເປັນດັ່ງກ່າວ ແລະ ທຸກການຊ່ວຍເຫລືອຂອງບັນດາທ່ານຈະຖືກສົ່ງມອບຕໍ່ໄປຍັງຄະນະກຳມະການສະເພາະກິດເພື່ອຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມທີ່ ສປປລາວ ຢ່າງທົ່ວເຖິງ.

ນະຄອນຫຼວງປາຣີ, ວັນທີ 17 ກັນຍາ 2024

**République démocratique populaire lao**
**Paix, Indépendance, Démocratie, Unité, Prospérité**

Ambassade de la RDP Lao
Auprès de la République française

## Appel aux dons pour les populations lao affectées par les inondations

Ambassade de la République Démocratique Populaire Lao en France souhaite vous informer que suite au passage du super typhon YAGI, le plus important depuis la décennie, survenu la semaine dernière au Laos qui a causé d'importants dégâts matériels et de pertes des vies humaines entraînant également des crues exceptionnelles et importantes inondations dans les provinces de Louangnamtha, Oudomxay, Luangprabang, Capitale de Vientiane et d'autres. Ce désastre a provoqué les besoins d'urgence de nourriture, eaux potables, médicaments et d'autres nécessités pour les populations concernées.

Face aux urgences et à l'ampleur de dégâts, le gouvernement lao a mis tous ses efforts et moyens pour porter secours et assistance aux populations et en même temps, a appelé aux solidarités de tous les lao et de l'international pour aider les victimes de ce désastre naturel.

Dans cet esprit, l'ambassade du Laos à Paris voudrait faire appel à la solidarité et à la générosité de la communauté laotienne vivant en France ainsi qu' à tous les amis du Laos en vue d'aider les populations affectées. Toutes personnes désireuses de faire un don ont la possibilité de faire un virement bancaire ou d'envoyer un chèque sur les coordonnées suivantes :

Virement:

Ambassade du la RDP Lao

BRED Banque populaire

Compte numéro: 728 02 7781

IBAN : FR7610107008680072802778121

Chèque à l'ordre de:

l'Ambassade de la RDP Lao, 74 avenue Raymond Poincaré, 75116 Paris

Pour tous renseignements complémentaires, veuillez contacter madame Thone Somphavilay, Troisième secrétaire, numéro de téléphone: 06 86 57 08 26, email: ambalaoparis@orange.fr

L'Ambassade de la RDP Lao à Paris porte l'espoir d'accueillir les générosités de toutes et de tous pour venir en aide au peuple lao en ce moment difficile et toutes les contributions recueillisses seront remises au comité d'ad hoc au soutien aux victimes de catastrophe dans le meilleur délai.

Paris, le 17 septembre 2024